# ພິທີເຊັນບົດບັນທຶກຄວາມເຂົ້າໃຈ
# ວ່າດ້ວຍການຮ່ວມມືເຊື່ອມຕໍ່ ແລະ ພັດທະນາລະບົບຖານຂໍ້ມູນທີ່ດິນ
# ເພື່ອຫັນເປັນທັນສະໄໝ ລະຫວ່າງ ກົມທີ່ດິນ,
# ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
# ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທີ່ ນະຄອນຫຼວງວຽງຈັນ, ວັນທີ 12 ພະຈິກ 2020




ວັນທີ 12 ພະຈິກ 2020, ຢູ່ທີ່ ກົມຄວບຄຸມ ແລະ ຕິດຕາມກວດກາມົນລະພິດ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ຈັດພິທີເຊັນ MOU ລະຫວ່າງ ກົມທີ່ດິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ວ່າດ້ວຍການຮ່ວມມືເພື່ອການເຊື່ອມຕໍ່ ແລະ ພັດທະນາລະບົບຖານຂໍ້ມູນທີ່ດິນ ເພື່ອຫັນເປັນທັນສະໄໝ. ຕາງໜ້າລົງນາມໃນຄັ້ງນີ້ໂດຍ **ທ່ານ ປອ ອານົງສອນ ພົມມະຈັນ** ຫົວໜ້າກົມທີ່ດິນ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ **ທ່ານ ພູຊົງ ຈັນທະຈັກ** ຜູ້ອຳນວຍການໃຫຍ່ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໂດຍ **ທ່ານ ທ່ານ ສົມມາດ ພົລເສນາ** ລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ **ທ່ານ ສອນໄຊ ສິດພະໄຊ** ຜູ້ວ່າການທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍຄະນະນຳກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຄະນະກົມຈາກກະຊວງການເງິນ, ຄະນະກົມຈາກກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຄະນະອານວຍການ, ຄະນະພະແນກ, ສູນ ແລະ ສາຂາ ຂອງ ທຄຕລ ພາຍໃນນະຄອນຫຼວງວຽງຈັນ ຕະຫຼອດຮອດພະນັກງານຂອງທັງສອງຝ່າຍ ແລະ ສື່ມວນຊົນຈາກຫຼາຍພາກສ່ວນກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.

ລະບົບຮັບຊຳລະພາສີທີ່ດິນ ແມ່ນການຫັນການຈັດເກັບລາຍຮັບຈາກການຮັບຊຳລະຄ່າພາສີທີ່ດິນເຂົ້າງົບປະມານຂອງລັດ ໄປສູ່ລະບົບທີ່ທັນສະໄໝ ແລະ ອຳນວຍຄວາມສະດວກໃນການຊຳລະພາສີທີ່ດິນໃຫ້ມີຄວາມປອດໄພ, ວ່ອງໄວ ທັງຮັບປະກັນໃຫ້ແກ່ການຈັດເກັບລາຍຮັບເຂົ້າງົບປະມານແຫ່ງລັດໃຫ້ມີລັກສະນະລວມສູນ, ມີຄວາມຮັດກຸມ, ຖືກຕ້ອງ, ໂປ່ງໃສ ແລະ ສາມາດກວດສອບໄດ້. ລະບົບການຮັບຊຳລະພາສີທີ່ດິນດັ່ງກ່າວ ແມ່ນໄດ້ເລີ່ມໃຫ້ບໍລິການ ແຕ່ປີ 2018 ເປັນຕົ້ນມາ ເປັນການ

ຮ່ວມມື ລະຫວ່າງ ກົມສ່ວຍສາອາກອນ, ກະຊວງການເງິນ ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ. ປະຈຸບັນ ມີ ທະນາຄານຕົວແທນຮັບຊໍາລະພາສີທີ່ດິນ ຮ່ວມກັບ ທຄຕລ ແລ້ວ **9 ທະນາຄານ ປະກອບມີ: ທະນາຄານສົ່ງເສີມກະສິກາ, ທະນາຄານຮ່ວມທຸລະກິດລາວ-ຫວຽດ, ທະນາຄານພັດທະນາລາວ, ທະນາຄານລາວຈີນ, ທະນາຄານຮ່ວມພັດທະນາ, ທະນາຄານອິນໂດຈີນ, ທະນາຄານບີໄອຊີ, ທະນາຄານເອັສທີ ແລະ ທະນາຄານລາວ-ຝລັ່ງ.**

ການບໍລິການຮັບຊໍາລະພາສີທີ່ດິນຜ່ານລະບົບທະນາຄານ ສາມາດຊໍາລະໄດ້ຕາມຊ່ອງທາງບໍລິການດັ່ງນີ້:

- ຜ່ານປ່ອງບໍລິການ
- ຜ່ານ BCEL One
- ຜ່ານ BCEL i-Bank
- ຜ່ານຕົວແທນ BCOME (ທີ່ເຂົ້າຮ່ວມໂຄງການ)
- ຜ່ານປ່ອງບໍລິການ ແລະ ຊ່ອງທາງອອນລາຍຂອງ ທະນາຄານຕົວແທນ

ການຮ່ວມມືລະຫວ່າງ ກົມທີ່ດິນ, ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໃນຄັ້ງນີ້ ແມ່ນການເຊື່ອມຕໍ່ຂໍ້ມູນຕອນດິນຈາກລະບົບທີ່ດິນແຫ່ງຊາດ ເຂົ້າສູ່ລະບົບຮັບຊໍາລະພາສີທີ່ດິນຜ່ານລະບົບທະນາຄານ ເຮັດໃຫ້ປະຊາຊົນ ສາມາດຊໍາລະພາສີທີ່ດິນຜ່ານລະບົບທະນາຄານໄດ້ກວ້າງຂວາງ ແລະ ສະດວກຍິ່ງຂຶ້ນ, ພ້ອມກັນນັ້ນ ກໍ່ຍັງເປັນການອັບເດດຂໍ້ມູນຕອນດິນຈາກລະບົບຮັບຊໍາລະພາສີທີ່ດິນ ກັບຄືນສູ່ລະບົບທີ່ດິນແຫ່ງຊາດ ອີກດ້ວຍ.

ພາຍຫຼັງທີ່ເຊື່ອມຕໍ່ຂໍ້ມູນຕອນດິນເຂົ້າສູ່ລະບົບຮັບຊໍາລະພາສີທີ່ດິນຜ່ານລະບົບທະນາຄານ ສໍາເລັດແລ້ວ, ກົມທີ່ດິນ ແລະ ທຄຕລ ຕົກລົງເຫັນດີສືບຕໍ່ຮ່ວມມືກັນໃນການພັດທະນາລະບົບຮັບຊໍາລະຄ່າທໍານຽມ ແລະ ຄ່າບໍລິການອື່ນໆກ່ຽວກັບວຽກງານທີ່ດິນຂອງກົມທີ່ດິນ ໂດຍຜ່ານລະບົບທະນາຄານ ເພື່ອເພີ່ມຄວາມສະດວກໃຫ້ກັບປະຊາຊົນ, ຮັບປະກັນຄວາມຖືກຕ້ອງ, ສົ່ງມອບລາຍຮັບໃຫ້ທັນກັບສະພາບການ, ທັນສະໄໝໂປ່ງໃສ ແລະ ສາມາດກວດສອບໄດ້.

ນະໂອກາດນີ້ຂໍສະແດງຄວາມຂອບໃຈມາຍັງລູກຄ້າທຸກທ່ານທີ່ນໍາໃຊ້ຜະລິດຕະພັນ ຂອງ ທຄຕລ ຕະຫຼອດມາ. ທຄຕລ ຈະສືບຕໍ່ພັດທະນາລະບົບການບໍລິການໃຫ້ມີຄວາມທັນສະໄໝ ແລະ ສືບຕໍ່ຮ່ວມມືກັບພາກສ່ວນອື່ນໆເພື່ອອໍານວຍຄວາມສະດວກໃນການຊໍາລະສະສາງຕ່າງໆຂອງລູກຄ້າ ຜ່ານ ທຄຕລ ດ້ວຍເຄື່ອງມືທີ່ທັນສະໄໝ ຫຼື ໃນຍຸກແຫ່ງການບໍລິການທະນາຄານແບບດີຈີຕໍ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທັນສະໄໝ ວ່ອງໄວ ໝັ້ນໃຈ

Facebook: BCEL Bank, Website: www.bcel.com.la